ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ຄະນະກຳມະການດັດສົມທຸລະກິດນ້ຳປະປາ ເລກທີ /ຄດນປ

ນະຄອນຫລວງວຽງຈັນ, ວັນທີ 12 ຕຸລາ 2010

# ບົດສະຫລຸບ ລາຍງານຜົນສຳເລັດ ຂອງ ກອງປະຊຸມຄະນະກຳມະການ ດັດສົມທຸລະກິດນ້ຳປະປາ ທົ່ວປະເທດ, ຄັ້ງວັນທີ 30 ກັນຍາ 2010

– ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ ກະຊວງ ຍທຂ ວ່າດ້ວຍການອະນຸມັດ ຈັດກອງປະຊຸມຄົບຄະນະ ຂອງ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ສະບັບ ເລກທີ 12795 /ຍທຂ, ລົງວັນທີ 24/08/2010.

ຄະນະກຳມະການ ດັດສົມທຸລະກິດນ້ຳປະປາ ໄດ້ຈັດກອງປະຊຸມທົ່ວປະເທດຄັ້ງທີ່ ສອງ, ເພື່ອ ເຜີຍແຜ່ ແຈ້ງການ ກ່ຽວກັບ ເປົ້າໝາຍ ການປະຕິບັດງານ ດ້ານການບໍລິການ ຂອງ ຜູ້ໃຫ້ການ ບໍລິການ ແລະ ການຕິດຕາມ ລະດັບການບໍລິການ ຂອງ ຜູ້ດັດສົມທຸລະກິດນ້ຳປະປາ, ສະເໜີ ຜ່ານ ຮ່າງບົດລາຍງານ ກ່ຽວກັບ ຜົນການປະຕິບັດງານ ຂອງຂະແໜງນ້ຳປະປາ ທົ່ວປະເທດ ປະຈຳປີ 2009 ແລະ ຜ່ານບົດສະຫລຸບການຈັດຕັ້ງປະຕິບັດວຽກງານດັດສົມຜ່ານມາ ລວມທັງແຜນການ ສືບຕໍ່ ຈັດຕັ້ງປະຕິບັດ ປະຈຳສົກປີ 2010-2011 ແລະ ແຜນການປະຕິບັດງານ ແຕ່ປີ 2010 ຮອດປີ 2020 ຂອງຫ້ອງການດັດສົມນ້ຳປະປາ. ກອງປະຊຸມໄດ້ຈັດຂຶ້ນທີ່ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນ ເວລາໜຶ່ງວັນຄືໃນວັນທີ 30 ຕຸລາ2010.

## I. ຈຸດປະສົງ ຂອງກອງປະຊຸມ:

1. ເຜີຍແຜ່ແຈ້ງການ ກ່ຽວກັບ ເປົ້າໝາຍການປະຕິບັດງານ ດ້ານການບໍລິການ ຂອງຜູ້ໃຫ້ການບໍລິການ ແລະ ການຕິດຕາມ ລະດັບການບໍລິການ ຂອງ ຜູ້ດັດສົມ ທຸລະກິດນ້ຳປະປາ.
2. ສະເໜີ ຜ່ານຜົນການວິເຄາະຂໍ້ມູນ ການສ້າງບົດລາຍງານ ກ່ຽວກັບ ຜົນການປະຕິບັດງານ ຂອງ ຂະແໜງນ້ຳປະປາ ທົ່ວປະເທດ ປະຈຳປີ 2009.
3. ສະເໜີ ຜ່ານບົດສະຫລຸບການຈັດຕັ້ງປະຕິບັດວຽກງານດັດສົມ ຜ່ານມາ ລວມທັງແຜນການ ຈັດຕັ້ງປະຕິບັດ ປະຈຳສົກປີ 2010-2011 ແລະ ແຜນການປະຕິບັດງານ ແຕ່ປີ 2010 ຮອດປີ 2020 ຂອງ ຫ້ອງການດັດສົມນ້ຳປະປາ.

## II. ການກະກຽມກອງປະຊຸມ:

ເພື່ອດຳເນີນກອງປະຊຸມໃຫ້ໄດ້ຮັບຜົນຕາມລະດັບຄາດໝາຍທີ່ວາງໄວ້, ຄະນະກຳມະການດັດສົມທຸລະກິດນ້ຳປະປາ ໄດ້ປຶກສາຫາລື, ກະກຽມ, ຈັດຕັ້ງ ແລະ ມອບໜ້າທີ່ໃຫ້ ບັນດາ ທ່ານ ໃນຄະນະກຳມະການດັດສົມ ແລະ ຫ້ອງການດັດສົມນ້ຳປະປາ ຮັບຜິດຊອບວຽກລະອຽດລຸ່ມນີ້:

1 ມອບໃຫ້ ຫ້ອງການດັດສົມນ້ຳປະປາ ຮັບຜິດຊອບກະກຽມ ບັນດາ ເອກະສານ, ດ້ານງົບປະມານ, ເຮັດວຽກປະສານງານ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ ກັບກອງປະຊຸມ.

2 ມອບໃຫ້ ບັນດາ ທ່ານ ຮອງປະທານ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ຮັບຜິດຊອບຕິດຕາມການກະກຽມ ແລະ ໃຫ້ການປຶກສາຫາລື ດ້ານເນື້ອໃນຂອງເອກະສານ ທີ່ຈະສະເໜີໃນກອງປະຊຸມ ພ້ອມທັງມອບໝາຍໃຫ້ສະເໜີ ບາງເອກະສານ ທີ່ກ່ຽວຂ້ອງ ກັບ ວຽກງານດັດສົມທຸລະກິດນ້ຳປະປາ ຕໍ່ ກອງປະຊຸມ.

3 ກຳນົດເປົ້າໝາຍຜູ້ເຂົ້າຮ່ວມກອງປະຊຸມ ເຊິ່ງແມ່ນທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ: ຫ້ອງວ່າການປົກຄອງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ບັນດາ ແຂວງ, ນະຄອນຫລວງວຽງຈັນ ແລະ ບັນດາ ລັດວິສາຫະກິດນ້ຳປະປາ ແຂວງ, ນະຄອນຫລວງ ແລະ ບັນດາ ກົມ ອ້ອມຂ້າງກະຊວງທີ່ກ່ຽວຂ້ອງ.

4 ກະກຽມງົບປະມານ ສຳລັບ ການຈັດກອງປະຊຸມໂດຍສະເໜີນຳໃຊ້ ງົບປະມານເຊັ່ນ:

   1) ງົບປະມານຈາກໂຄງການນ້ຳປະປາ ແລະ ສຸຂາພິບານພາກເໜືອ ແລະພາກກາງ (ADB) ຄ່າໃຊ້ຈ່າຍບໍລິຫານກອງປະຊຸມ ແລະ ຄ່າໃຊ້ຈ່າຍຄ່າພັກເຊົາຈຳນວນໜຶ່ງວັນ ສຳລັບ ຫົວໜ້າຫ້ອງວ່າການແຂວງ ແລະ ຫົວໜ້າພະແນກ ຍທຂ ປະຈຳແຂວງ.

   2) ລັດວິສາຫະກິດນ້ຳປະປາ ບັນດາ ແຂວງ ຮັບຜິດຊອບຊ່ວຍຄ່າອັດຕາກິນ, ຄ່າເດີນທາງໄປ-ກັບ ຂອງພະນັກງານ ຈາກບັນດາແຂວງ ແລະ ຄ່າກິນຢູ່ ແລະ ຄ່າພັກເຊົ່າ ຂອງຫົວໜ້າຫ້ອງວ່າການແຂວງ ແລະ ຫົວໜ້າພະແນກ ຍທຂ ປະຈຳແຂວງ ທີ່ເກີນຈາກ 1 ວັນປະຊຸມ.

## III. ການດຳເນີນກອງປະຊຸມ:

ກອງປະຊຸມຄົບຄະນະ ຂອງ ຄະນະກຳມະການດັດສົມທຸລະກິດນ້ຳປະປາ, ໄດ້ໄຂຂຶ້ນໃນ ຕອນເຊົ້າເວລາ 8 ໂມງ 30 ຂອງວັນທີ 30 ກັນຍາ 2010, ໂດຍການເປັນປະທານ ຂອງ ທ່ານ ດຣ ສົມພອນ ເດດອຸດົມ ຮອງປະທານ ສະພາວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຮອງປະທານ ຄະນະກຳມະການດັດສົມທຸລະກິດນ້ຳປະປາ; ມີບັນດາ ທ່ານ ຮອງປະທານ, ຄະນະກຳມະການ ດັດສົມທຸລະກິດນ້ຳປະປາ ແລະ ຜູ້ຕາງໜ້າຄະນະກຳມະການດັດສົມທຸລະກິດນ້ຳປະປາ ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້; ຫົວໜ້າ, ຮອງຫົວໜ້າ ແລະ ຜູ້ຕາງໜ້າຫ້ອງວ່າການປົກຄອງ ແຂວງ; ຫົວໜ້າ, ຮອງຫົວໜ້າ ແລະ ຜູ້ຕາງໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ; ຜູ້ອຳນວຍການ,

ຮອງຜູ້ອຳນວຍການ ແລະ ວິຊາການ ບັນດາ ລັດວິສາຫະກິດນ້ຳປະປາ ແຂວງ, ນະຄອນຫຼວງ ໃນທົ່ວປະເທດ; ຜູ້ຕາງໜ້າ ຫ້ອງການກະຊວງ, ກົມຈັດຕັ້ງ ແລະ ພະນັກງານ, ຫ້ອງການດັດສົມ ແລະ ໂຄງການອ້ອມຂ້າງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເຂົ້າຮ່ວມ ຈຳນວນທັງໝົດ 78 ທ່ານ, ຍິງ 7 ທ່ານ.

ໃນວາລະກອງປະຊຸມ ຫລັງຈາກປະທານ ໄດ້ກ່າວເປີດກອງປະຊຸມ ຜູ້ແທນກອງປະຊຸມກໍ່ໄດ້ຮັບຟັງການສະເໜີ ເອກະສານ ກ່ຽວກັບ ວຽກງານດັດສົມທຸລະກິດນ້ຳປະປາ ເຊິ່ງປະກອບມີ 3 ເອກະສານ ດັ່ງນີ້:

1 ເຜີຍແຜ່ແຈ້ງການ ກ່ຽວກັບ ເປົ້າໝາຍການປະຕິບັດງານ ດ້ານການບໍລິການ ຂອງ ຜູ້ໃຫ້ການບໍລິການ ແລະ ການຕິດຕາມ ລະດັບການບໍລິການ ຂອງ ຜູ້ດັດສົມ ທຸລະກິດນ້ຳປະປາ.

2 ສະເໜີ ຮ່າງການວິເຄາະຂໍ້ມູນ ການສ້າງບົດລາຍງານ ກ່ຽວກັບ ຜົນການປະຕິບັດງານ ຂອງ ຂະແໜງ ນ້ຳປະປາ ທົ່ວປະເທດ ປະຈຳປີ 2009.

3 ສະເໜີ ຜ່ານ ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ ດັດສົມຜ່ານມາ ລວມທັງ ແຜນການຈັດຕັ້ງປະຕິບັດ ປະຈຳສົກປີ 2010-2011 ແລະ ແຜນການປະຕິບັດງານແຕ່ປີ 2010 ຮອດປີ 2020.

ຈາກນັ້ນປະທານກອງປະຊຸມໄດ້ ໃຫ້ທິດຊີ້ນຳ ກ່ຽວກັບ ວິທີການຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳຄິດ, ຄຳເຫັນເປັນຕົ້ນແມ່ນ ບັນຫາ ທີ່ໄດ້ນຳສະເໜີຜ່ານກອງປະຊຸມ. ຈາກນັ້ນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ຢ່າງພາວະວິໄສເຊິ່ງສາມາດສັງລວມ ບາງເນື້ອໃນຈິດໃຈສຳຄັນ ດັ່ງລຸ່ມນີ້:

1. ເຫັນດີເປັນເອກະພາບ ກັບ ແຈ້ງການ ກ່ຽວກັບ ເປົ້າໝາຍການປະຕິບັດງານດ້ານການບໍລິການຂອງຜູ້ໃຫ້ ການບໍລິການ ແລະ ການຕິດຕາມ ລະດັບການບໍລິການ ຂອງ ຜູ້ດັດສົມທຸລະກິດນ້ຳປະປາ ເພາະມັນຈະເປັນການຊຸກຍູ້ສົ່ງເສີມ ແລະ ຊ່ວຍຜູ້ດຳເນີນທຸລະກິດນ້ຳປະປາ ປັບປຸງການຄຸ້ມຄອງ ແລະ ເຮັດໃຫ້ການສະໜອງ ແລະ ການບໍລິການນ້ຳປະປາ ນັບມື້ມີປະສິດທິພາບ ແລະ ໃຫ້ເປັນທີ່ເພິ່ງພໍໃຈຂອງຜູ້ຊົມໃຊ້, ແຕ່ຖ້າເປັນໄປໄດ້ຄວນຈັດກອງປະຊຸມລະດັບວິຊາການ ເພື່ອ ຂະຫຍາຍ ບັນດາ ເນື້ອໃນທີ່ສຳຄັນຕົ້ນຕໍ ຂອງແຈ້ງການດັ່ງກ່າວ ເພື່ອ ແນ່ໃສ່ເຮັດໃຫ້ການຈັດຕັ້ງ ປະຕິບັດໄດ້ງ່າຍ ແລະ ຮັບປະກັນ ຜົນສຳເລັດຕາມຈຸດປະສົງ.
2. ກ່ຽວກັບ ຜົນການວິເຄາະຂໍ້ມູນ ສຳລັບ ການສ້າງບົດລາຍງານ ກ່ຽວກັບ ຜົນການປະຕິບັດງານຂອງ ຂະແໜງນ້ຳປະປາ ທົ່ວປະເທດ ປະຈຳປີ 2009 ນັ້ນ, ສ່ວນຫລາຍແມ່ນເຫັນດີເປັນເອກະພາບ, ແຕ່ ແຂວງຫລວງພະບາງ ແລະ ແຂວງຜົ້ງສາລີ ຈະຕ້ອງໄດ້ກວດກາ ຂໍ້ມູນທີ່ໄດ້ຮັບ ແລະ ວິເຄາະຄືນ ສຳລັບ ບາງຈຸດ.
3. ການລົງເກັບກຳຂໍ້ມູນ ຂອງ ບັນດາ ລັດວິສາຫະກິດນ້ຳປະປາແຂວງ ຕ້ອງໃຫ້ພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ: ພະແນກ ຍທຂ ຫຼື ຫ້ອງວ່າການແຂວງ ຢັ້ງຢືນນຳ.

4. ຄວນປຶກສາຫາລືແກ້ໄຂບັນຫາ ຂອງການຈົດຕົວເລກໝໍ້ແທກນ້ຳໃຫ້ມີຄວາມຊັດເຈນ, ຫຼີກເວັ້ນການກະຕວງ, ກໍລະນີໝໍ້ແທກນ້ຳມີການເປເພຄວນມີການຄົ້ນຄວ້າ ແລະ ປ່ຽນແທນໜ່ວຍໃໝ່ ການຕິດຕັ້ງໝໍ້ແທກນ້ຳຄວນຊອກຫາວິທີການໃໝ່ ເພື່ອ ເຮັດໃຫ້ການເຂົ້າຈົດຕົວເລກໝໍ້ແທກນ້ຳໄດ້ງ່າຍ.
5. ຄວນມີການປັບປຸງຄຸນນະພາບນ້ຳປະປາ ເພື່ອ ເຮັດແນວໃດ ເຮັດໃຫ້ ນ້ຳປະປາດື່ມໄດ້.
6. ກ່ຽວກັບ 9 ມາດຕະຖານຕົວຊີ້ບອກ ແມ່ນເຫັນດີ, ແຕ່ຄວນໃຫ້ມີມາດຕະຖານ ຫລື ວິທີການ ຂອງລັດວິສາຫະກິດ ເພື່ອໃຫ້ສາມາດແຂ່ງຂັນ ກັບ ຜູ້ປະກອບການ ຈາກພາກສ່ວນເອກະຊົນໄດ້ໃນອະນາຄົດ.
7. ສະເໜີໃຫ້ ບັນດາ ລັດວິສາຫະກິດນ້ຳປະປາແຂວງ, ນະຄອນຫຼວງ ທົບທວນ ແລະ ເອົາໃຈໃສ່ຄືນ ກ່ຽວກັບ ຄ່າໃຊ້ຈ່າຍທີ່ຕິດພັນກັບ ການດຳເນີນທຸລະກິດ ເປັນຕົ້ນ ຄ່າໃຊ້ຈ່າຍ ສຳລັບ ວຽກງານບໍລິຫານ, ເປີເຊັນນ້ຳສູນເສຍ ແລະ ອື່ນໆ ທີ່ເຫັນວ່າຍັງສູງ.
8. ຄວນລົງສຳຫຼວດ ເກັບກຳຈຳນວນໝໍ້ແທກນ້ຳແຕ່ລະປະເພດໃຫ້ລະອຽດ ໂດຍສະເພາະ ແມ່ນປະເພດໃນຄົວເຮືອນ, ປະເພດນອກຄົວເຮືອນ ແລະ ປະເພດອື່ນໆໃຫ້ລະອຽດເທົ່າທີ່ຈະແຍກໄດ້.
9. ສະເໜີ ໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ, ກຳນົດປະເພດຂອງຕົວເມືອງ ໃຫ້ຈະແຈ້ງເປັນຕົ້ນ ຕົວເມືອງໃຫຍ່, ຕົວເມືອງນ້ອຍ ແລະ ປະເພດອື່ນໆ ເພື່ອ ເປັນບ່ອນອີງ ສຳລັບ ການກຳນົດປະສິດທິພາບ ຂອງການນຳໃຊ້ພະນັກງານ, ບໍລິມາດການຊົມໃຊ້ນ້ຳ, ເປີເຊັນນ້ຳສູນເສຍ ແລະ ຕົວຊີ້ບອກອື່ນໆ ທີ່ກ່ຽວພັນ ກັບ ການປະເມີນຜົນການປະຕິບັດງານ ຂອງຜູ້ໃຫ້ ການບໍລິການນ້ຳປະປາ ໃນ ທົ່ວປະເທດ.
10. ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ເຫັນດີເປັນເອກະພາບກັນໃຫ້ສ້າງແບບຟອມ ທີ່ເປັນເອກະພາບສຳລັບ ການເກັບກຳຂໍ້ມູນ ໃຫ້ແກ່ ຜູ້ບໍລິການນ້ຳປະປາ ພ້ອມທັງ ແນະນຳວິທີການເກັບກຳ ແລະບັນທຶກຂໍ້ມູນດັ່ງກ່າວໃຫ້ຖືກຕ້ອງຊັດເຈນ.
11. ສະເໜີ ຂັ້ນເທິງ ພິຈາລະນາ ປະກອບບຸກຄະລາກອນ ໃຫ້ແກ່ ຫ້ອງການດັດສົມນ້ຳປະປາ ໃຫ້ພຽງພໍ ແນ່ໃສ່ເຮັດໃຫ້ ການຈັດຕັ້ງປະຕິບັດໜ້າທີ່ ທີ່ຂັ້ນເທິງມອບໝາຍໃຫ້ ສຳເລັດ ແລະ ມີປະສິດທິຜົນ.
12. ການຈັດກອງປະຊຸມຄັ້ງຕໍ່ໄປ ສະເໜີໃຫ້ເຊີນຜູ້ແທນ ຈາກ ຫ້ອງການປັບປຸງທຸລະກິດຂັ້ນແຂວງເຂົ້າຮ່ວມປຶກສາຫາລືນຳ.
13. ຜູ້ແທນເຂົ້າຮ່ວມກອງປະຊຸມ ໄດ້ເຫັນດີເປັນເອກະພາບກັນສະເໜີໃຫ້ຂັ້ນເທິງ ພິຈາລະນາປັບລາຄາໄຟຟ້າ ທີ່ນຳໃຊ້ເຂົ້າໃນການຜະລິດນ້ຳປະປາ ໃຫ້ຢູ່ໃນລາຄາດຽວກັນ ກັບ ລາຄາ ສຳລັບນຳໃຊ້ເຂົ້າໃນວຽກງານຊົນລະປະທານ.
14. ສະເໜີໃຫ້ ຫ້ອງການດັດສົມນ້ຳປະປາ ຈັດກອງປະຊຸມສະເພາະ ເພື່ອ ປຶກສາຫາລືຮ່ວມ ກັບຜູ້ປະກອບການ ໃນຂະແໜງນ້ຳປະປາ ເພື່ອ ຄົ້ນຄ້ວາຊອກຫາວິທີການແກ້ໄຂ ບັນຫາຕ່າງໆ ທີ່ກ່ຽວພັນ ກັບ ທຸລະກິດນ້ຳປະປາ.

15. ສະເໜີ ໃຫ້ຄົ້ນຄວ້າຊອກຫາແຫຼ່ງທຶນ ເພື່ອຂະຫຍາຍວຽກງານນ້ຳປະປາ ໃຫ້ສາມາດສະໜອງໄດ້ຕາມຄວາມຕ້ອງການ ຂອງຜູ້ຊົມໃຊ້ນັບມື້ນັບເພີ້ມຂຶ້ນ.
16. ສະເໜີໃຫ້ ປັບປຸງ ລະບົບບັນຊີ ຂອງ ລັດວິສາຫະກິດນ້ຳປະປາຄືນໃໝ່ ເພື່ອໃຫ້ມີຄວາມເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດໃນທົ່ວປະເທດ.
17. ສະເໜີໃຫ້ຄົ້ນຄວ້າ ແລະ ປັບປຸງກົດລະບຽບ ຂອງ ລັດວິສາຫະກິດນ້ຳປະປາ ໂດຍສະເພາະດ້ານບຸກຄະລາກອນຄືນໃໝ່ຊຶ່ງເຫັນວ່າບຸກຄະລາກອນ ຂອງບາງລັດສະຫະກິດ ຍັງບໍ່ແທດເໝາະກັບໜ້າວຽກຕົວຈິງ.

## IV. ຕີລາຄາຜົນໄດ້ຮັບ ຈາກກອງປະຊຸມ:

### 1. ຜົນໄດ້ຮັບ ຈາກກອງປະຊຸມ:

ຜ່ານການດຳເນີນກອງປະຊຸມໜຶ່ງວັນ ຄືວັນທີ 30 ກັນຍາ 2010 ສາມາດ ຕີລາຄາຜົນໄດ້ຮັບຂອງກອງປະຊຸມດັ່ງຕໍ່ໄປນີ້:

1. ດ້ານທັດສະນະ-ແນວຄິດ: ໄດ້ສຳເລັດການເຜີຍແຜ່ແຈ້ງການ ກ່ຽວກັບ ເປົ້າໝາຍການປະຕິບັດງານ ດ້ານການບໍລິການ ຂອງຜູ້ໃຫ້ບໍລິການ ແລະ ການຕິດຕາມ ລະດັບການບໍລິການ ຂອງຜູ້ດັດສົມ, ເຊິ່ງໄດ້ສ້າງຄວາມຮັບຮູ້ ແລະ ເຂົ້າໃຈເປັນພື້ນຖານ ແລະ ເປັນເອກະພາບ ກ່ຽວກັບ ໜ້າທີ່, ພາລະບົດບາດຂອງຜູ້ໃຫ້ບໍລິການ, ຮູ້ຈຸດປະສົງ, ເປົ້າໝາຍການປະຕິບັດງານ ດ້ານການບໍລິການ ແລະ ກົນໄກຕິດຕາມກວດກາລະດັບການບໍລິການ ແມ່ນເປັນເຄື່ອງມື ເພື່ອ ຊ່ວຍຜູ້ດຳເນີນທຸລະກິດນ້ຳປະປາ ໄດ້ມີການປັບປຸງການຄຸ້ມຄອງ ແລະ ສະໜອງ ນ້ຳປະປາ ເຮັດໃຫ້ການບໍລິການນ້ຳປະປາ ມີປະສິດທິພາບ ແລະ ໃຫ້ເປັນທີ່ເພິ່ງພໍໃຈຂອງຜູ້ຊົມໃຊ້.
2. ຄວາມເປັນເອກະພາບ ແລະ ການຕັດສິນໃຈ: ເປັນການສ້າງເງື່ອນໄຂໃຫ້ທຸກພາກສ່ວນ ທີ່ກ່ຽວຂ້ອງ ໄດ້ມີໂອກາດປຶກສາ, ສົນທະນາ, ແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນເຊິ່ງເຮັດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ມີຄວາມເຂົ້າໃຈເປັນເອກະພາບ ກ່ຽວກັບໜ້າທີ່ພາລະບົດ ບາດ ແລະ ສາຍກ່ຽວພັນ ຂອງຂະແໜງຕົນທີ່ມີຕໍ່ເນື້ອໃນແຈ້ງການແນະນຳດັ່ງກ່າວ, ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ຜົນການວິເຄາະຂໍ້ມູນ ສຳລັບ ການສ້າງບົດລາຍງານ ກ່ຽວກັບ ຜົນການປະຕິງານ ຂອງຂະແໜງນ້ຳປະປາ ປະຈຳປີ 2009 ແລະ ຜົນຂອງການຈັດຕັ້ງປະຕິບັດວຽກງານ ດັດສົມທຸລະກິດນ້ຳປະປາ ຜ່ານມາ ແລະ ແຜນການສືບຕໍ່ຈັດຕັ້ງປະຕິບັດ ປະຈຳສົກປີ 2010-2011 ແລະ ແຜນການປະຕິບັດງານແຕ່ປີ 2010 ຮອດປີ 2020.
3. ໄດ້ຮັບຮູ້ ກ່ຽວກັບ ດ້ານດີ, ຜົນສຳເລັດ ແລະ ຈຸດທີ່ເຫັນວ່າຍັງອ່ອນ ທີ່ ຈະຕ້ອງໄດ້ເອົາໃຈໃສ່ ໃນການປັບປຸງແກ້ໄຂ ສຳລັບ ຜູ້ດຳເນີນທຸລະກິດນ້ຳປະປາ.

4. ເຫັນໄດ້ບັນຫາສຳຄັນ ສຳລັບ ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ໃນການປະສານສົມທົບ ເພື່ອ ຊອກຫາວິທີການປັບປຸງແກ້ໄຂໂດຍສະເພາະແມ່ນດ້ານລະບຽບການ ແລະ ກຳນົດໝາຍຕ່າງໆ ທີ່ກ່ຽວພັນກັບວຽກງານດັ່ງກ່າວ ແມ່ນມີຄວາມຈຳເປັນຕ້ອງໄດ້ສືບຕໍ່ສ້າງ ແລະ ປັບປຸງແກ້ໄຂໃຫ້ນຳໃຊ້ໄດ້ໃນໄລຍະເວລາທີ່ເຫັນສົມຄວນ.

## 2. ດ້ານດີ ແລະ ຂໍ້ສະດວກ:

ທ່ານ ຮອງປະທານ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ໄດ້ໃຫ້ກຽດເຂົ້າຮ່ວມເປັນປະທານ, ກ່າວເປີດ ແລະ ປິດກອງປະຊຸມ ພ້ອມທັງໄດ້ໃຫ້ຄຳເຫັນຊີ້ນຳ ໂດຍໄດ້ເໜັ້ນໜັກເຖິງຄວາມສຳຄັນ ແລະ ຈຳເປັນ ຂອງກອງປະຊຸມ, ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນໄດ້ເຂົ້າຮ່ວມ ແລະ ສົ່ງຕົວແທນ ຂະແໜງການຕົນ ເຂົ້າຮ່ວມກອງປະຊຸມຕາມການເຊື້ອເຊີນ ແລະ ໄດ້ຕັ້ງໜ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນຂອງກອງປະຊຸມ, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ກ່ຽວກັບ ວຽກງານທີ່ກ່ຽວພັນກັບການ ດັດສົມກໍຄືການດຳເນີນທຸລະກິດນ້ຳປະປາ ຢ່າງເປັນຂະບວນຟົດຟື້ນ ແລະໄດ້ຮັບໝາກຮັບຜົນເປັນຢ່າງດີ

## 3. ດ້ານອ່ອນ ແລະ ສິ່ງທີ່ຄວນປັບປຸງ:

1. ການຈັດວາງໂຕະຕັ້ງໃຫ້ແຂກນັ່ງໃນຫ້ອງປະຊຸມຍັງບໍ່ທັນເປັນລະບົບດີເທົ່າທີ່ຄວນ, ຄວນຈະຈັດໃຫ້ແຂກນັ່ງເປັນແຕ່ລະພາກສ່ວນ: ພາກສ່ວນຄະນະກຳມະການດັດສົມທຸລະກິດນ້ຳປະປາ, ແຂກທີ່ມາ ຈາກ ກົມກອງ ແລະ ພະແນກການທີ່ກ່ຽວ ຂ້ອງອ້ອມຂ້າງ ກະຊວງໂຍທາທິການ ແລະ ຂົນສົ່ງ, ແຂກທີ່ມາຈາກຫ້ອງວ່າການປົກຄອງແຂວງ, ແຂກທີ່ມາຈາກ ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງນະຄອນ ຫລວງ ແລະ ອື່ນໆ;
2. ເນື້ອໃນ ຂອງ ກອງປະຊຸມແມ່ນສຸດທີ່ມີ ຄວາມໝາຍຄວາມສຳຄັນ ໂດຍສະເພາະແມ່ນແຈ້ງການແນະນຳ ກ່ຽວກັບ ເປົ້າໝາຍການປະຕິບັດງານດ້ານການບໍລິການ ຂອງຜູ້ໃຫ້ການບໍລິການ ແລະ ວິທີການຕິດຕາມປະເມີນຜົນການປະຕິບັດງານ ໃນຂະແໜງນ້ຳປະປາ, ແຕ່ການເຜີຍແຜ່ເຊື່ອມຊຶມໃຊ້ເວລາພຽງ 30 ກວ່ານາທີ ເຫັນວ່າເປັນການຍາກທີ່ຈະໃຫ້ຜູ້ແທນກອງປະຊຸມເຂົ້າໃຈເນື້ອໃນດັ່ງກ່າວ ໄດ້ຢ່າງຄົບຖ້ວນ. ຖ້າເປັນໄປໄດ້ ຄວນຈະຈັດກອງປະຊຸມລະດັບວິຊາການອີກ ເພື່ອ ເຜີຍແຜ່ ແລະ ເຊື່ອມຊຶມເນື້ອໃນແຈ້ງການດັ່ງກ່າວ.

## 4. ບົດຮຽນທີ່ຖອດໄດ້:

1. ການເຜີຍແຜ່ ເຊື່ອມຊຶມນະໂຍບາຍ ລະບຽບການຕ່າງໆ ຄວນໃຊ້ເວລາໃຫ້ພຽງພໍ ແລະສົມດູນ ກັບ ຄວາມໝາຍຄວາມສຳຄັນ ຂອງ ເນື້ອໃນດັ່ງກ່າວ ແລະ ຄວນເຊື້ອເຊີນພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນ ລວມທັງຜູ້ບໍລິຫານ ແລະ ຜູ້ປະຕິບັດງານຕົວຈິງ ເພື່ອ ຮ່ວມ

ປຶກສາຫາລື ແນ່ໃສ່ເຮັດໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈເປັນເອກະພາບ, ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ.

2. ການຈັດກອງປະຊຸມລະດັບຊາດ ກ່ຽວກັບ ວຽກງານດັດສົມທຸລະກິດນ້ຳປະປາ ຄັ້ງຕໍ່ໄປ ເຫັນສົມຄວນຕ້ອງໄດ້ເຊີນຜູ້ຕ່າງໜ້າສະພາອຳນວຍການ ຂອງລັດວິສະຫະກິດນ້ຳປະປາ ແຂວງ ແລະ ນະຄອນເຂົ້າຮ່ວມນຳ ເພື່ອ ປຶກສາ ແລະ ແລກປ່ຽນບົດຮຽນ.
3. ການດຳເນີນກອງປະຊຸມຄັ້ງຕໍ່ໄປ ຈຶ່ງປະຕິບັດຕາມວາລະກອງປະຊຸມ ທີ່ໄດ້ກຳນົດໄວ້ແລ້ວນັ້ນ ເພື່ອໃຫ້ ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ຕິດຕາມ ແລະ ປະຕິບັດຖືກຕ້ອງທຸກປະການ.

## 5. ທິດທາງແຜນການຜັນຂະຫຍາຍຜົນໄດ້ຮັບ ຂອງກອງປະຊຸມ ແລະ ສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ:

ເພື່ອ ຜັນຂະຫຍາຍຜົນໄດ້ຮັບ ຈາກກອງປະຊຸມ ແລະ ສ້າງເປັນທິດທາງແຜນການ ສຳລັບ ການສືບຕໍ່ຈັດຕັ້ງປະຕິບັດໃຫ້ໄດ້ຕາມເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ ແລະ ເພື່ອ ເປັນການກະຕຸກຊຸກຍູ້, ເອື້ອອຳນວຍຄວາມສະດວກ ແລະ ເປັນການຊີ້ທິດເຍືອງທາງ ໃຫ້ແກ່ ຜູ້ດຳເນີນທຸລະກິດ ນ້ຳປະປາ ໄດ້ມີເງື່ອນໄຂ ແລະ ຂໍ້ສະດວກສາມາດດຳເນີນທຸລະກິດ ຮັບໃຊ້ສັງຄົມ ໃຫ້ນັບມື້ ເຕີບໃຫຍ່ ເຂັ້ມແຂງ, ມີປະສິດທິພາບ ແລະ ບັນລຸໄດ້ທຸກເປົ້າໝາຍທີ່ໄດ້ວາງໄວ້, ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນຈຶ່ງໄດ້ເອົາໃຈໃສ່ບາງເນື້ອໃນດັ່ງນີ້:

1. ຄວນຂະຫຍາຍຄຳອະທິບາຍດ້ານເນື້ອໃນ ຂອງ ແຈ້ງການແນະນຳ ກ່ຽວກັບ ເປົ້າໝາຍການປະຕິບັດງານ ດ້ານການບໍລິການ ຂອງຜູ້ໃຫ້ການບໍລິການ ລວມທັງເນື້ອໃນ ຂອງຕົວຊີ້ບອກທັງ 9 ລາຍການໃຫ້ລະອຽດ ພ້ອມທັງຈັດກອງປະຊຸມ ເຜີຍແຜ່ລະດັບວິຊາການ ແນ່ໃສ່ເຮັດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ຜູ້ໃຫ້ການບໍລິການ ໃນຂະແໜງນ້ຳປະປາ ສາມາດຈັດຕັ້ງປະຕິບັດຕາມໄດ້ງ່າຍ ແລະ ໄດ້ຮັບຜົນເປັນຢ່າງດີ.
2. ເພື່ອ ເຮັດໃຫ້ຜູ້ດຳເນີນທຸລະກິດນ້ຳປະປາ ສາມາດດຳເນີນທຸລະກິດໄດ້ແບບຍືນຍົງ, ມີປະສິດທິຜົນ ແລະ ທຸກຄົນສາມາດຊື້ໄດ້ ສະເໜີໃຫ້ຂັ້ນເທິງ ພິຈາລະນາປັບລາຄາ ໄຟຟ້າທີ່ນຳໃຊ້ເຂົ້າໃນການຜະລິດນ້ຳປະປາ ໃຫ້ຢູ່ໃນລາຄາດຽວກັນ ກັບ ລາຄາ ສຳລັບ ນຳໃຊ້ເຂົ້າໃນວຽກງານຊົນລະປະທານ.
3. ພາກສ່ວນທີ່ກ່ຽວຂ້ອງ ຈຶ່ງໄດ້ຄົ້ນຄວ້າ, ກຳນົດປະເພດ ຂອງຕົວເມືອງໃຫ້ຈະແຈ້ງເປັນຕົ້ນ ຕົວເມືອງໃຫຍ່, ຕົວເມືອງນ້ອຍ ແລະ ຕົວເມືອງ ອື່ນໆ ເພື່ອ ເປັນບ່ອນອີງ ສຳລັບ ການກຳນົດປະສິດທິພາບ ຂອງການນຳໃຊ້ພະນັກງານ, ບໍລິມາດການຊົມໃຊ້ນ້ຳ, ເປີເຊັນ ນ້ຳສູນເສຍ ແລະ ຕົວຊີ້ບອກອື່ນໆ ທີ່ກ່ຽວພັນ ກັບ ວຽກງານປະເມີນຜົນການປະຕິບັດງານຂອງຜູ້ໃຫ້ການບໍລິການ ໃນຂະແໜງນ້ຳປະປາ ທົ່ວປະເທດ.

4. ບັນດາ ລັດວິສາຫະກິດນ້ຳປະປາແຂວງ, ນະຄອນຫລວງຈຶ່ງໄດ້ເອົາໃຈໃສ່ ທົບທວນຄືນກ່ຽວກັບ ຄ່າໃຊ້ຈ່າຍທີ່ຕິດພັນ ກັບ ການດຳເນີນທຸລະກິດເປັນຕົ້ນ: ຄ່າໃຊ້ຈ່າຍ ສຳລັບວຽກງານບໍລິຫານ, ເປີເຊັນນ້ຳສູນເສຍ, ແລະ ອື່ນໆທີ່ເຫັນວ່າຍັງສູງເກີນຄວນ.
5. ບັນດາ ທ່ານໃນຄະນະກຳມະການ ດັດສົມທຸລະກິດນ້ຳປະປາ ຈຶ່ງໄດ້ກຳນົດໜ້າທີ່ພາລະບົດບາດ ຂອງຂະແໜງການຕົນທີ່ກ່ຽວພັນ ກັບວຽກງານດັດສົມທຸລະກິດນ້ຳປະປາ ເພື່ອ ແນ່ໃສ່ເຮັດໃຫ້ໄດ້ປະກອບສ່ວນຊ່ວຍ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບຜົນດີ.
6. ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ, ທຸກພາກສ່ວນຈຶ່ງໄດ້ນຳເອົາເນື້ອໃນ, ຈິດໃຈຂອງກອງ ປະຊຸມດັ່ງກ່າວນີ້ ນຳສະເໜີລາຍງານ ໃຫ້ຂັ້ນນຳຂະແໜງການຕົນໄດ້ຮັບຊາບ ແລະ ສືບຕໍ່ ໃຫ້ການຮ່ວມມືໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ດັ່ງກ່າວໃຫ້ສຳເລັດຜົນຕາມເປົ້າໝາຍ.

**ລັດຖະມົນຕີຊ່ວຍວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ**

**ປະທານ ຄະນະກຳມະການ ດັດສົມທຸລະກິດນ້ຳປະປາ**